20ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

老挝人民民主共和国

和平　独立　民主　统一　繁荣

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ
Lao-China Securities Public Company

ເລກທີ 305 /ບລຈ

老-中证券[司]字第 305号

ນະຄອນຫຼວງວຽງຈັນ, ວັນທີ 9 ກໍລະກົດ 2026

2026 年 7 月 9 日，首都万象

# ມະຕິ

# ກອງປະຊຸມຜູ້ຖືຮຸ້ນ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ

# ສະໄໝວິສາມັນ ຄັ້ງທີ I ປະຈຳປີ 2026

# 老-中证券公众公司 2026 年第一次临时股东会

# 决议

- ອີງຕາມ ຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນຂອງບໍລິສັດຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024;
  根据 2024 年 12 月 11 日证管委颁发的第 15 号《证券公司及上市公司报告及信息披露条例》（修订版）；
- ອີງຕາມ ລະບຽບວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018;
  根据 2018 年 9 月 27 日老交所颁发的第 008 号《信息披露制度》；
- ອີງຕາມ ກົດລະບຽບ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ສະບັບເລກທີ 001/ບລຈ, ລົງວັນທີ 15 ຕຸລາ 2025.
  根据 2025 年 10 月 15 日订立的《老-中证券公众公司章程》（老-中证券[司]字第 001 号）。

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ (ບລຈ) ໄດ້ຈັດກອງປະຊຸມຜູ້ຖືຮຸ້ນ ສະໄໝວິສາມັນ ຄັ້ງທີ I ປະຈຳປີ 2026 ເມື່ອວັນທີ 9 ກໍລະກົດ 2026 ເວລາ 9:00 ໂມງ ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8 ອາຄາຕະຫຼາດຫຼັກຊັບລາວ, ບ້ານ ໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ, ໂດຍການເປັນປະທານຂອງ **ທ່ານ ນະ ຈັນຕະລີວົງ ສະມາຊິກອົດສະລະ ບລຈ.** ກອງປະຊຸມຄັ້ງນີ້ ມີຜູ້ຖືຮຸ້ນເຂົ້າຮ່ວມທັງໝົດ 48 ທ່ານ, ໃນນັ້ນມີຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ຈຳນວນ 38 ທ່ານ, ຖືຮຸ້ນລວມ 1,080,111,000 ຮຸ້ນ ຄິດເປັນ 97.21% ຂອງຈຳນວນຮຸ້ນທັງໝົດຂອງ ບລຈ, ຊຶ່ງປະຈຸບັນ ຈຳນວນຜູ້ຖືຮຸ້ນທັງໝົດຂອງ ບລຈ ມີຈຳນວນ 1,409 ທ່ານ.

老-中证券公众公司（简称“老-中证券”）于 2026 年 7 月 9 日上午 9:00，在老挝万象市赛色塔县蓬覃村的老挝证券交易所（老交所）大楼 8 楼大会议室召开了 2026 年第一次临时股东会。会议由**老-中证券独立董事纳·占达里翁先生**主持。共有 48 名股东出席，其中，38 名股东授权代表参会。参会股东合计持有股份 1,080,111,000 股，占公司总股本的 97.21%。目前老-中证券股东总有 1409 名。

**ກອງປະຊຸມຜູ້ຖືຮຸ້ນ ໄດ້ພິຈາລະນາ ແລະ ມີມະຕິ ດັ່ງນີ້:**

股东会决定

**ວາລະ 1: ພິຈາລະນາ ແລະ ຮັບຮອງ ປັບປຸງແຜນການນຳໃຊ້ທຶນທີ່ລະດົມໄດ້ຜ່ານການອອກຈຳໜ່າຍຮຸ້ນຕໍ່ມວນຊົນ ຄັ້ງທຳອິດ ຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ.**

议案一：审议变更老-中证券公众公司首次公开募股募集资金使用方案。

ກອງປະຊຸມຜູ້ຖືຮຸ້ນໄດ້ພິຈາລະນາ ແລະ ຮັບຮອງການປັບປຸງແຜນການນຳໃຊ້ທຶນ 10,000,000,000 ກີບ ຈາກການລົງທຶນສ້າງຕັ້ງບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ມາເປັນການເພີ່ມກະແສເງິນສົດ ຂອງ ບລຈ, ພ້ອມທັງລາຍງານ ສຄຄຊ ແລະ ເປີດເຜີຍຂໍ້ມູນດັ່ງກ່າວຜ່ານ ຕລຊລ. ບລຈ ຈະມີແຜນນຳໃຊ້ທຶນດັ່ງກ່າວ ເຂົ້າໃນ ການຮັບປະກັນຄ່າໃຊ້ຈ່າຍ Software and Hardware ຂອງການພັດທະນາລະບົບຊື້-ຂາຍຮຸ້ນຜ່ານມືຖື (MTS) ເພື່ອໃຫ້ພະແນກນາຍໜ້າ ຊື້-ຂາຍ ຫຼັກຊັບ ສາມາດອຳນວຍຄວາມສະດວກແກ່ການຊື້-ຂາຍຫຼັກຊັບ ຂອງລູກຄ້າ, ດຶງ ດູດນັກລົງທຶນມາເປີດບັນຊີນຳ ບລຈ ພ້ອມທັງເພີ່ມລາຍຮັບນາຍໜ້າຊື້-ຂາຍຫຼັກຊັບ, ສ່ວນຈຳນວນເງິນທີ່ເຫຼືອ ຈະ ລົງທຶນໃສ່ເງິນຝາກນຳທະນາຄານທຸລະກິດ. ມອບສິດໃຫ້ ບລຈ ຮ່າງແຜນງົບປະມານ Software and Hardware ຂອງການພັດທະນາລະບົບຊື້-ຂາຍຮຸ້ນຜ່ານມືຖື, ເພື່ອສະເໜີຕໍ່ສະພາບໍລິຫານຮັບຮອງ. ໃນໄລຍະດັ່ງກ່າວ, ເພື່ອຍົກ ສູງປະສິດທິພາບແຫ່ງການນຳໃຊ້ທຶນຮອນ, ເຫັນດີນຳໃຊ້ທຶນທັງໝົດ 10,000,000,000 ກີບດັ່ງກ່າວ, ລົງທຶນໃສ່ ເງິນຝາກນຳທະນາຄານທຸລະກິດ, ຈົນຮອດສະພາບໍລິຫານເຫັນດີຮັບຮອງ ແຜນງົບປະມານ Software and Hardware ຂອງການພັດທະນາລະບົບຊື້-ຂາຍຮຸ້ນຜ່ານມືຖື.

股东会审议通过将原计划用于设立基金管理公司的 10,000,000,000 基普（约合 306.65 万元），调整为用于补充老-中证券的流动资金，并向证管委办公厅报告以及通过老交所进行信息披露。老-中证券计划将上述资金用于保障手机证券交易系统（MTS）开发软硬件费用，让经纪业务部门能为客户证券交易提供便利，吸引投资者到老-中证券开户并增加经纪业务收入，剩余资金将用于银行存款投资。授权老-中证券起草手机证券交易系统开发软硬件费用预算，报董事会审批。期间，为提高资金使用效率，允许将上述 10,000,000,000 基普（约合 306.65 万元）全部投资于银行存款，直至董事会审议通过手机证券交易系统开发软硬件费用预算。

ກອງປະຊຸມຜູ້ຖືຮຸ້ນໄດ້ມີມະຕິເຫັນດີ ດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

股东会一致通过决议，投票结果如下：

- ເຫັນດີ 1,080,111,000 ສຽງ ຄິດເປັນ 100% ຂອງຈຳນວນສຽງທັ້ງໝົດທີ່ເຂົ້າຮ່ວມກອງປະຊຸມ

赞成票：1,080,111,000 票，占出席会议总票数的 100%

- ບໍ່ເຫັນດີ 0 ສຽງ ຄິດເປັນ 0% ຂອງຈຳນວນສຽງທັ້ງໝົດທີ່ເຂົ້າຮ່ວມກອງປະຊຸມ

反对票：0 票，占出席会议总票数的 0%

**ວາລະ 2: ພິຈາລະນາ ແລະ ຮັບຮອງ ການປັບປຸງໂຄງປະກອບຄະນະອຳນວຍການຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ.**

议案二：审议变更老-中证券公众公司管理层成员。

ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງການປັງປຸງໂຄງປະກອບຄະນະອຳນວຍການຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ, ໂດຍມີລາຍລະອຽດດັ່ງນີ້:

ມອບໃຫ້ສະພາບໍລິຫານແຕ່ງຕັ້ງທ່ານ ຫວາງ ເວີຍ (MR WANG WEI) ເປັນຜູ້ອຳນວຍການ ແລະ ຜູ້ຕາງໜ້າທາງກົດໝາຍ ຂອງ ບລຈ. ພ້ອມກັນນັ້ນ, ທ່ານ ລິນ ລີ ບໍ່ໄດ້ດຳລົງຕຳແໜ່ງ ອຳນວຍການ ແລະ ຜູ້ຕາງໜ້າທາງກົດໝາຍ ຂອງ ບລຈ ອີກຕໍ່ໄປ. ໂຄງປະກອບຄະນະອຳນວຍການພາຍຫຼັງປັບປຸງ ປະກອບມີລາຍຊື່ດັ່ງລຸ່ມນີ້:

1. ທ່ານ ຫວາງ ເວີຍ ເປັນຜູ້ອຳນວຍການ ແລະ ຜູ້ຕາງໜ້າທາງກົດໝາຍ;
2. ທ່ານ ປອ. ສຸດທິເດດ ບຸນລືໄຊ ເປັນຮອງຜູ້ອຳນວຍການ.

股东会审议通过变更老-中证券公众公司管理层成员，细节如下：

交由董事会任命王崴先生担任老-中证券新一任总经理兼法定代表人。同时，李林不再担任老-中证券总经理兼法定代表人职务。变更后的老-中证券管理层成员名单如下：

| | | |
|---|---|---|
| 1. | 王崴 | 总经理、法定代表人 |
| 2. | 苏提德·本勒赛（博士） | 副总经理 |

ກອງປະຊຸມຜູ້ຖືຮຸ້ນໄດ້ມີມະຕິເຫັນດີ ດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

股东会一致通过决议，投票结果如下：

- ເຫັນດີ 1,080,111,000 ສຽງ ຄິດເປັນ 100% ຂອງຈຳນວນສຽງທັ້ງໝົດທີ່ເຂົ້າຮ່ວມກອງປະຊຸມ

赞成票：1,080,111,000 票，占出席会议总票数的 100%

- ບໍ່ເຫັນດີ 0 ສຽງ ຄິດເປັນ 0% ຂອງຈຳນວນສຽງທັ້ງໝົດທີ່ເຂົ້າຮ່ວມກອງປະຊຸມ

反对票：0 票，占出席会议总票数的 0%

**ວາລະ 3: ພິຈາລະນາ ແລະ ຮັບຮອງ ການປັບປຸງໂຄງປະກອບສະມາຊິກສະພາບໍລິຫານຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ.**

议案三：审议变更老-中证券公众公司董事会成员。

ກອງປະຊຸມຜູ້ຖືຮຸ້ນໄດ້ພິຈາລະນາ ແລະ ຮັບຮອງການປັບປຸງໂຄງປະກອບສະມາຊິກສະພາບໍລິຫານຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ, ໂດຍມີລາຍລະອຽດດັ່ງນີ້:

1. ເຫັນດີ ທ່ານ ລິນ ລີ ລາອອກຈາກຕຳແໜ່ງສະມາຊິກສະພາບໍລິຫານທີ່ມີສ່ວນຮ່ວມໃນການບໍລິຫານ ບລຈ ແລະ ແຕ່ງຕັ້ງ ທ່ານ ຫວາງ ເວີ່ຍ (MR WANG WEI) ເປັນສະມາຊິກສະພາບໍລິຫານທີ່ມີສ່ວນຮ່ວມໃນການບໍລິຫານຜູ້ໃໝ່ ເພື່ອປ່ຽນແທນ ທ່ານ ລິນ ລີ;
2. ເຫັນດີ ທ່ານ ຣສ. ປອ. ປິຍະ ວົງພິດ ລາອອກຈາກຕຳແໜ່ງ ສະມາຊິກອິດສະລະ ບລຈ ແລະ ແຕ່ງຕັ້ງ ທ່ານ ຣສ. ປອ ໄຊພອນ ກອງມະນີລາ ເປັນສະມາຊິກອິດສະລະຜູ້ໃໝ່ ເພື່ອປ່ຽນແທນ ທ່ານ ຣສ. ປອ. ປິຍະ ວົງພິດ;
3. ເຫັນດີ ທ່ານ ຫວາງ ເວີ່ຍ (MR WANG WEI) ລາອອກຈາກຕຳແໜ່ງ ສະມາຊິກອິດສະລະ ບລຈ ແລະ ແຕ່ງຕັ້ງ ທ່ານ ປອ. ເຈຍ ຮຸ່ຍ ( MR JIA HUI) ເປັນສະມາຊິກອິດສະລະຜູ້ໃໝ່ ເພື່ອປ່ຽນແທນ ທ່ານ ຫວາງ ເວີ່ຍ (MR WANG WEI) ;
4. ຫຼັງຈາກສະມາຊິກສະພາບໍລິຫານທີ່ມີສ່ວນຮ່ວມໃນການບໍລິຫານຄົນໃໝ່ 1 ທ່ານ ແລະ ສະມາຊິກອິດສະລະຄົນໃໝ່ 2 ທ່ານ ທີ່ຖືກແຕ່ງຕັ້ງໃໝ່ດັ່ງກ່າວ ເຂົ້າຮັບຕຳແໜ່ງແລ້ວ, ຜູ້ດຳລົງຕຳແໜ່ງເດີມຈະຕ້ອງດຳເນີນການມອບ-ຮັບວຽກງານກັບຜູ້ດຳລົງຕຳແໜ່ງໃໝ່ແບບລາຍບຸກຄົນໃຫ້ສຳເລັດຮຽບຮ້ອຍກ່ອນ, ຈຶ່ງຈະສາມາດພົ້ນຈາກຕຳແໜ່ງໄດ້ຢ່າງເປັນທາງການ ເພື່ອຮັບປະກັນໃຫ້ວຽກງານຂອງສະພາບໍລິຫານ ຂອງ ບລຈ ດຳເນີນໄປຢ່າງຕໍ່ເນື່ອງ ແລະ ລາບລື່ນ.

ພາຍຫຼັງຮັບຮອງການແຕ່ງຕັ້ງສະມາຊິກສະພາບໍລິຫານດັ່ງກ່າວແລ້ວ, ໂຄງປະກອບສະມາຊິກສະພາບໍລິຫານ ບລຈ 09 ທ່ານ ມີລາຍຊື່ດັ່ງນີ້:

1. ທ່ານ ໝູໄຊ ພູມສຸວັນ ເປັນປະທານສະພາບໍລິຫານ;
2. ທ່ານ ລີ ຊາງເວີ່ຍ (MR LI CHANGWEI) ເປັນຮອງປະທານສະພາບໍລິຫານ;
3. ທ່ານ ໂຈ ຄຸນ (MR ZHOU KUN) ເປັນສະມາຊິກສະພາບໍລິຫານ ທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ;
4. ທ່ານ ຈາງ ຫົງບິນ (MR ZHANG HONGBIN) ເປັນສະມາຊິກສະພາບໍລິຫານ ທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ;
5. ທ່ານ ສິມພິງ ບໍລິບຸດ ເປັນສະມາຊິກສະພາບໍລິຫານ ທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ;
6. ທ່ານ ຫວາງ ເວີ່ຍ (MR WANG WEI) ເປັນສະມາຊິກສະພາບໍລິຫານ ທີ່ມີສ່ວນຮ່ວມໃນການບໍລິຫານ;
7. ທ່ານ ຣສ. ປອ ໄຊພອນ ກອງມະນີລາ ເປັນສະມາຊິກອິດສະລະ;
8. ທ່ານ ປອ. ເຈຍ ຮຸ່ຍ (MR JIA HUI) ເປັນສະມາຊິກອິດສະລະ;
9. ທ່ານ ນະ ຈັນຕະລີວົງ ເປັນສະມາຊິກອິດສະລະ.

股东会审议通过变更老-中证券公众公司董事会成员，细节如下：

1. 同意李林辞去老-中证券执行董事职务并任命王崴担任老-中证券执行董事，接替李林工作；
2. 同意比亚·翁匹副教授、博士辞去老-中证券独立董事职务并任命赛蓬·贡马尼拉副教授、博士担任老-中证券独立董事，接替比亚·翁匹副教授、博士工作；
3. 同意王崴辞去老-中证券独立董事职务并任命贾辉(博士)担任老-中证券独立董事，接替王崴工作；
4. 上述新的执行董事和2名独立董事到任后，原执行董事和独立董事应与新任执行董事和独立董事一对一进一步完成工作交接后方可正式离任，以确保老-中证券董事会工作平稳过渡。

股东会审议任命上述董事会成员以后，老-中证券09位董事会成员名单如下：

| | | |
|---|---|---|
| 1. | 努赛·普苏万 | 董事长； |
| 2. | 李长伟 | 副董事长； |
| 3. | 周昆 | 非执行董事； |
| 4. | 张洪斌 | 非执行董事； |
| 5. | 颂蓬·波里布 | 非执行董事； |
| 6. | 王崴 | 执行董事； |
| 7. | 赛蓬·贡马尼拉 副教授、博士 | 独立董事； |
| 8. | 贾辉（博士） | 独立董事； |
| 9. | 纳·占达里翁 | 独立董事。 |

ກອງປະຊຸມຜູ້ຖືຮຸ້ນໄດ້ມີມະຕິເຫັນດີ ດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

股东会一致通过决议，投票结果如下：

- ເຫັນດີ 1,080,111,000 ສຽງ ຄິດເປັນ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

赞成票：1,080,111,000票，占出席会议总票数的100%

- ບໍ່ເຫັນດີ 0 ສຽງ ຄິດເປັນ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

反对票：0票，占出席会议总票数的0%

ປະທານກອງປະຊຸມ

会议主席

ທ່ານ ນະ ຈັນຕະລິວົງ

纳·占达里翁